ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

1425

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1425 /ສສກ

ນະຄອນຫຼວງວຽງຈັນ ວັນທີ ໒໒ ກັນຍາ 2023

# ມະຕິ

## ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດ ຂອງຂະແໜງການຍ່ອຍການສຶກສານອກໂຮງຮຽນ ທົ່ວປະເທດ ປະຈຳປີ 2023; ຄັ້ງວັນທີ 14-15 ກັນຍາ 2023 ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມການສຶກສານອກໂຮງຮຽນ ສະບັບເລກທີ 4471/ສສກ, ລົງວັນທີ 09 ກັນຍາ 2022;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຜູ້ເຂົ້າຮ່ວມກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດ ຂະແໜງການຍ່ອຍການສຶກສານອກໂຮງຮຽນ ທົ່ວປະເທດ ປະຈຳປີ 2023; ສະບັບເລກທີ 1241/ສສກ, ລົງວັນທີ 31 ມີນາ 2023;
- ອີງຕາມ ມະຕິກອງປະຊຸມຜູ້ບໍລິຫານການສຶກສານອກໂຮງຮຽນ ທົ່ວປະເທດ ປະຈຳປີ 2022, ສະບັບເລກທີ 0738/ກສນ, ລົງວັນທີ 28 ກັນຍາ 2022.

ກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດ ຂອງຂະແໜງການຍ່ອຍການສຶກສານອກໂຮງຮຽນ ປະຈຳປີ 2023 ໄດ້ຈັດຂຶ້ນໃນລະຫວ່າງວັນທີ 14-15 ກັນຍາ 2023 ທີ່ ເມືອງແກ້ວອຸດົມ ແຂວງວຽງຈັນ ໃນຮູບແບບກັບທີ່ ພາຍໃຕ້ການເປັນປະທານຂອງ ທ່ານ ປອ. ສີສຸກ ວົງວິຈິດ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ; ໂດຍມີບັນດາທ່ານຫົວໜ້າກົມ/ຮອງຫົວໜ້າກົມ ອ້ອມຂ້າງກະຊວງ ຫົວໜ້າ/ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ, ຫົວໜ້າ/ຮອງຫົວໜ້າຂະແໜງການສຶກສານອກໂຮງຮຽນ, ຜູ້ອຳນວຍການສູນພັດທະນາການສຶກສານອກໂຮງຮຽນ, ສູນການສຶກສານອກໂຮງຮຽນ ພາກເໜືອ ແລະ ພາກໃຕ້, ສຳນັກພິມສຶກສາ ໄດ້ເຂົ້າຮ່ວມ ທັງໝົດຈຳນວນ 76 ທ່ານ/ຍິງ 17 ທ່ານ.

ກອງປະຊຸມໄດ້ຮັບຟັງ (1) ບົດລາຍງານຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາການສຶກສານອກໂຮງຮຽນ ປະຈຳສົກປີ 2022-2023 ແລະ ແຜນພັດທະນາການສຶກສານອກໂຮງຮຽນ ປະຈຳສົກປີ 2023-2024; (2) ບົດລາຍງານການຈັດຕັ້ງປະຕິບັດ ມະຕິກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດ ຂະແໜງການຍ່ອຍການສຶກສານອກໂຮງຮຽນ ປະຈຳປີ 2022; (3) ບົດລາຍງານການຈັດຕັ້ງການຮຽນ-ການສອນບຳລຸງຍົກລະດັບການສຶກສາ ແລະ ຜົນສຳເລັດການຈັດຕັ້ງການສອບເສັງຈົບຊັ້ນມັດທະຍົມສຶກສາຕອນປາຍບຳລຸງ (ມ.7) ປະຈຳສົກປີ 2022-2023; (4) ບົດຮຽນການຈັດຕັ້ງການຮຽນ-ການສອນ ການສຶກສານອກໂຮງຮຽນ ຂອງເມືອງວຽງທອງ ແຂວງບໍລິຄຳໄຊ; (5) ລາຍງານຄວາມຄືບໜ້າຂອງການປັບປຸງລະບົບສະຖິຕິຖານຂໍ້ມູນ ແລະ ການເຂົ້າເຖິງຂໍ້ມູນຂ່າວສານ ການສຶກສານອກໂຮງຮຽນ ຜ່ານລະບົບອອນລາຍ; (6) ບົດລາຍງານສະພາບການຈັດຕັ້ງການຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃນຂອບເຂດທົ່ວປະເທດ; (7) ບົດຮຽນການຊຸກຍູ້ສົ່ງເສີມວຽກງານການສຶກສານອກໂຮງຮຽນ ໃນ ສປປລາວ ແລະ ພາກພື້ນ ຂອງ



Scanned with CamScanner

ຫ້ອງການ ຄີວີວີ (8) ບົດຮຽນການຈັດຝຶກອົບຮົມວິຊາຊີບຂັ້ນພື້ນຖານ ຂອງສູນການຮຽນຮູ້ຊຸມຊົນສີຂຽວ ຂອງອົງການບ້ານຈຸດສຸມສາກົນ (VFI).

ຜ່ານການຮັບຟັງ, ຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຂອງບັນດາທ່ານຜູ້ແທນເຂົ້າຮ່ວມກອງປະຊຸມ ແລະ ອີງໃສ່ທິດຊີ້ນຳຂອງທ່ານຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ; ກອງປະຊຸມໄດ້ຕົກລົງເປັນເອກະພາບ ແລະ ຮັບຮອງເອົາເນື້ອໃນ, ປະເດັນສຳຄັນຕ່າງໆ ພ້ອມທັງກຳນົດອອກເປັນມະຕິຂອງກອງປະຊຸມ ດັ່ງນີ້:

1. ກອງປະຊຸມເຫັນດີເປັນເອກະພາບ ແລະ ຮັບຮອງເອົາໂດຍພື້ນຖານຕໍ່ ບົດສະຫຼຸບຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາ ປະຈຳສົກປີ 2022-2023 ແລະ ແຜນວຽກຈຸດສຸມ ປະຈຳສົກປີ 2023-2024 ຂອງຂະແໜງການຍ່ອຍການສຶກສານອກໂຮງຮຽນ; ພ້ອມທັງໃຫ້ກົມການສຶກສານອກໂຮງຮຽນ ປັບປຸງເນື້ອໃນຕາມຄຳເຫັນຂອງຜູ້ແທນກອງປະຊຸມ.
2. ກອງປະຊຸມເຫັນດີເປັນເອກະພາບ ແລະ ຮັບຮອງ ເອົາບົດລາຍງານການຕິດຕາມການຈັດຕັ້ງປະຕິບັດມະຕິກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດ ຂະແໜງການຍ່ອຍການສຶກສານອກໂຮງຮຽນ ປະຈຳປີ 2022.
3. ກອງປະຊຸມເຫັນດີ ແລະ ຮັບຮອງເອົາ ທິດທາງ, ມາດຕະການ ໃນການແກ້ໄຂບັນຫາ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ຂອງຂະແໜງການຍ່ອຍການສຶກສານອກໂຮງຮຽນ ສຳລັບສົກປີ 2023-2024 ດັ່ງນີ້:
   3.1. ໃຫ້ຜູ້ບໍລິຫານການສຶກສາແຕ່ລະຂັ້ນ ເອົາໃຈໃສ່ຊຸກຍູ້, ປຸກລະດົມ ການປະກອບສ່ວນຂອງພາກສ່ວນຕ່າງໆ ໃນທົ່ວສັງຄົມ ດ້ວຍວິທີການທີ່ສອດຄ່ອງ ແລະ ເໝາະສົມ ເພື່ອເຮັດປະຊາຊົນທີ່ເປັນກຸ່ມເປົ້າໝາຍຂອງການສຶກສານອກໂຮງຮຽນ ໄດ້ຮຽນຮູ້ໜັງສືໃຫ້ຫຼາຍຂຶ້ນ;
   3.2. ໃຫ້ຜູ້ບໍລິຫານການສຶກສາແຕ່ລະຂັ້ນ ຊຸກຍູ້, ສົ່ງເສີມ ດ້ວຍຫຼາຍຮູບແບບ ແລະ ຫຼາຍຮູບການ ເພື່ອເຮັດໃຫ້ຫົວໜ່ວຍທຸລະກິດ, ອົງການທີ່ບໍ່ຫວັງຜົນກຳໄລ, ຊຸມຊົນ ແລະ ພາກສ່ວນຕ່າງໆທົ່ວສັງຄົມ ມີສ່ວນຮ່ວມໃນວຽກງານການສຶກສານອກໂຮງຮຽນ; ຊຸກຍູ້ສົ່ງເສີມໃຫ້ສູນການສຶກສານອກໂຮງຮຽນ ສ້າງລາຍຮັບເພື່ອກຸ່ມຕົນເອງເທື່ອລະກ້າວ;
   3.3. ໃຫ້ກົມການສຶກສານອກໂຮງຮຽນ ນຳສະເໜີປັບປຸງລະບຽບການ ໃນການສະໜອງເງິນອຸດໜູນຄູອາສາສະໝັກສອນບຳລຸງຍົກລະດັບການສຶກສາ ຂອງການສຶກສານອກໂຮງຮຽນ ໃຫ້ຄະນະນຳກະຊວງສຶກສາທິການ ແລະ ກິລາ ພິຈາລະນາ;
   3.4. ໃຫ້ກົມການສຶກສານອກໂຮງຮຽນ ສືບຕໍ່ປັບປຸງ ແລະ ພັດທະນາ ລະບົບສະຖິຕິຖານຂໍ້ມູນ, ແບບຟອມການເກັບກຳຂໍ້ມູນສະຖິຕິກຸ່ມເປົ້າໝາຍປະລະ, ຜູ້ບໍ່ເຄີຍຮຽນ, ຜູ້ທີ່ໄດ້ຮຽນ, ຜູ້ຮຽນຈົບ, ຄູສອນ ແລະ ສະຖິຕິດ້ານຕ່າງໆ ຂອງຂະແໜງການສຶກສານອກໂຮງຮຽນ ເຂົ້າໃນແບບຟອມເກັບກຳຂໍ້ມູນສະຖິຕິ ຂອງສູນສະຖິຕິ ສຶກສາທິການ ແລະ ກິລາ ໃຫ້ສຳເລັດ; ພ້ອມທັງຈັດຝຶກອົບຮົມການນຳໃຊ້ໃຫ້ແກ່ຜູ້ຮັບຜິດຊອບ ໃນຂະແໜງການສຶກສາທິການ ແລະ ກິລາ ຂັ້ນແຂວງ/ນະຄອນຫຼວງວຽງຈັນ, ເມືອງ/ນະຄອນ ແລະ ສະຖານການສຶກສານອກໂຮງຮຽນ ຂັ້ນຕ່າງໆ ຢ່າງທົ່ວເຖິງ;
   3.5. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ ສ້າງຂະບວນການເພື່ອກະກຽມຈັດຕັ້ງພິທີປະກາດຈົບຊັ້ນມັດທະຍົມສຶກສາຕອນຕົ້ນບຳລຸງ ສຳລັບປະຊາຊົນ ລະດັບຊາດ;
   3.6. ໃຫ້ກົມການສຶກສານອກໂຮງຮຽນ ຄົ້ນຄວ້ານິຕິກຳ ກ່ຽວກັບມາດຕະຖານຂອງສູນການສຶກສານອກໂຮງຮຽນ ແລະ ສູນການຮຽນຮູ້ຊຸມຊົນ ຕົວແບບ; ພ້ອມທັງສ້າງເປັນສູນການສຶກສານອກໂຮງຮຽນຕົວແບບ ໃຫ້ໄດ້ແຂວງລະ 1 ແຫ່ງ;
   3.7. ໃຫ້ກົມການສຶກສານອກໂຮງຮຽນ ສືບຕໍ່ສ້າງ ແລະ ປັບປຸງ (ຮ່າງ) ແຜນປະຕິບັດງານແຫ່ງຊາດ ການຮຽນຮູ້ຕະຫຼອດຊີວິດ ໃຫ້ສຳເລັດ;
   3.8. ໃຫ້ກົມການສຶກສານອກໂຮງຮຽນ ສືບຕໍ່ສ້າງ ແລະ ປັບປຸງ (ຮ່າງ) ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສູນຝຶກອົບຮົມວິຊາຊີບຂັ້ນພື້ນຖານ ພາກເອກະຊົນ ໃຫ້ສຳເລັດ;



ກສວ

Scanned with CamScanner

3.9. ໃຫ້ກົມການສຶກສານອກໂຮງຮຽນ ສືບຕໍ່ສ້າງ ແລະ ປັບປຸງ (ຮ່າງ) ຄໍາແນະນໍາວ່າດ້ວຍການຮ່ວມມື ແລະ ນໍາໃຊ້ຊັບພະຍາກອນຮ່ວມກັນລະຫວ່າງ ການສຶກສານອກໂຮງຮຽນ ແລະ ສາມັນສຶກສາ;

3.10. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ ປະສານສົມທົບກັບ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ສືບຕໍ່ເກັບກໍາຂໍ້ມູນນັກຮຽນທີ່ປະລະການຮຽນ ແລະ ຜູ້ທີ່ຮຽນບໍ່ຈົບການສຶກສາຂັ້ນພື້ນຖານ ເພື່ອຈັດຕັ້ງການຮຽນ-ການສອນບໍາລຸງຍົກລະດັບການສຶກສາ ໃນສາຍການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບພື້ນຖານ;

3.11. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ ປະສານສົມທົບກັບ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ນະຄອນ ແລະ ຄະນະພັດທະນາການສຶກສາຂັ້ນບ້ານ ປັບປຸງພື້ນຖານໂຄງລ່າງ, ອາຄານ ສະຖານທີ່, ສະພາບແວດລ້ອມ, ສິ່ງອໍານວຍຄວາມສະດວກທີ່ຈໍາເປັນ ແລະ ອື່ນໆ ຂອງສະຖານການສຶກສານອກໂຮງຮຽນ ໃຫ້ສະອາດຈົບງາມເພື່ອສ້າງແຮງຈູງໃຈໃຫ້ກຸ່ມເປົ້າໝາຍຢາກມາຮຽນຫຼາຍຂຶ້ນ;

3.12. ໃຫ້ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ ສືບຕໍ່ສືບຕໍ່ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຄໍາແນະນໍາກ່ຽວກັບການນໍາໃຊ້ຊັບພະຍາກອນຮ່ວມກັນ ລະຫວ່າງການສຶກສານອກໂຮງຮຽນ ແລະ ອາຊີວະສຶກສາ ໃຫ້ບັນລຸຜົນ;

3.13. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສືບຕໍ່ຈັດຕັ້ງເຜີຍແຜ່ດໍາລັດວ່າດ້ວຍການຮຽນຮູ້ຕະຫຼອດຊີວິດ ໃຫ້ຊຸມຊົນ, ສັງຄົມ ແລະ ທຸກພາກສ່ວນ;

3.14. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ ສະຫຼຸບລາຍງານຜົນສໍາເລັດ, ທິດທາງແຜນການ, ສະຖິຕິຕ່າງໆ, ສ້າງແຜນຄວາມຕ້ອງການ, ແຜນງົບປະມານ ທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດວຽກງານການສຶກສານອກໂຮງຮຽນ ຂອງພາກສ່ວນຕົນ ໃຫ້ໄປຕາມປະຕິທິນການຈັດຕັ້ງປະຕິບັດວຽກງານທີ່ກົມການສຶກສານອກໂຮງຮຽນ ວາງໄວ້;

3.15. ໃຫ້ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດ ແລະ ນໍາໃຊ້ລະບົບສະຖິຕິຖານຂໍ້ມູນ ເພື່ອເກັບກໍາກ່ຽວກັບສະຖິຕິຕ່າງໆ ຂອງການສຶກສານອກໂຮງຮຽນ.

ຮອງລັດຖະມົນຕີ

ປະທານກອງປະຊຸມ

ປອ. ນ. ສີສຸກ ວິງວິຈິດ

Scanned with CamScanner